**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 5386 /ກຊສ
ນະຄອນຫຼວງວຽງຈັນ, ວັນທີ ໒໗ ກັນຍາ ໒໐໑໙

# ແຈ້ງການ

ຮຽນ: - ທ່ານ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ.
– ທ່ານ ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງໃນທົ່ວປະເທດ.

ເລື່ອງ: ການສະໜອງຂໍ້ມູນກ່ຽວກັບຕອນດິນ ໃຫ້ພໍ່ແມ່ປະຊາຊົນ ລວມທັງນິຕິບຸກຄົນ ແລະ ການຈັດຕັ້ງ.

- ອີງຕາມ ມາດຕາ 54 ແລະ 82 ຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 145/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1369/ກຊສ, ລົງວັນທີ 28 ມີນາ 2018 ວ່າດ້ວຍຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດຖະກອນຂະແໜງທີ່ດິນ.

ເພື່ອເປັນການຮັບໃຊ້ ແລະ ອຳນວຍຄວາມສະດວກ ບໍລິການໃຫ້ແກ່ພໍ່ແມ່ປະຊາຊົນ ລວມທັງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຂໍຂໍ້ມູນເອກະສານຕອນດິນ ຫຼື ຂໍການຢັ້ງຢືນກ່ຽວກັບບັນຫາທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງຕາມກົດໝາຍ ທັງເປັນການເພີ່ມທະວີຄວາມຮັບຜິດຊອບຂອງພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານທີ່ດິນ ໃຫ້ມີຄຸນທາດການເມືອງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່, ມີຈັນຍາບັນ, ສັດຊື່ບໍລິສຸດ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນທີ່ກົດໝາຍກຳນົດໄວ້, ບົນຈິດໃຈຮັບໃຊ້ປະຊາຊົນໂດຍບໍ່ຮຽກຮ້ອງຜົນປະໂຫຍດ ໃດໆ ທີ່ບໍ່ຖືກຕ້ອງຈາກ ປະຊາຊົນ ແລະ ນັກລົງທຶນ.

**ລັດຖະມົນຕີ ອອກແຈ້ງການ:**

1. ໃຫ້ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ແລະ ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເອົາໃຈໃສ່ຊີ້ນຳໂດຍກົງ ແລະ ຕິດຕາມພະນັກງານ-ລັດຖະກອນຢູ່ໃຕ້ຄວາມຮັບຜິດຊອບຂອງຕົນ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານທີ່ດິນ ຕ້ອງອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນເອກະສານຕອນດິນ ຫຼື ຢັ້ງຢືນກ່ຽວກັບບັນຫາທີ່ດິນໃຫ້ແກ່ພໍ່ແມ່ປະຊາຊົນ ລວມທັງນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມສະເໜີ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງຕາມກົດໝາຍ;

2. ການສະໜອງຂໍ້ມູນເອກະສານຕອນດິນ ຫຼື ຢັ້ງຢືນກ່ຽວກັບບັນຫາທີ່ດິນ ໃຫ້ແກ່ພໍ່ແມ່ປະຊາຊົນ ລວມທັງນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍບໍ່ໃຫ້ເກີນ 03 ຫາ 05 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ;

3. ການເກັບຄ່າທຳນຽມ ແລະ ຄ່າບໍລິການ ແມ່ນໃຫ້ປະຕິບັດຕາມລັດຖະບັດຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012. ສ່ວນການສະໜອງຂໍ້ມູນ ຫຼື ຢັ້ງຢືນກ່ຽວກັບບັນຫາທີ່ດິນ ໃຫ້ອົງການຈັດຕັ້ງລັດ ແມ່ນບໍ່ໃຫ້ເກັບຄ່າທຳນຽມ ແລະ ຄ່າບໍລິການ;

4. ຫ້າມພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານທີ່ດິນ ມີພຶດຕິກຳທີ່ສ້າງຄວາມຫຍຸ້ງຍາກ, ປະຕິເສດການສະເໜີ, ກົດໜ່ວງຖ່ວງດຶງການສະໜອງຂໍ້ມູນເອກະສານຕອນດິນ ຫຼື ຍັ້ງຢືນກ່ຽວກັບບັນຫາທີ່ດິນ ໃຫ້ແກ່ພໍ່ແມ່ປະຊາຊົນ ລວມທັງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີມານັ້ນ ລວມທັງບໍ່ໃຫ້ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຫຼື ອື່ນໆ ທີ່ລະເມີດກົດໝາຍ;

5. ຖ້າ ພໍ່ແມ່ປະຊາຊົນ ລວມທັງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຂໍ້ມູນເອກະສານຕອນດິນ ຫຼື ຍັ້ງຢືນກ່ຽວກັບບັນຫາທີ່ດິນ ຫາກພົບເຫັນ ພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານທີ່ດິນ ມີພຶດຕິກຳ ຕາມໄດ້ກ່າວໄວ້ໃນຂໍ້ 4 ເທິງນີ້ ແມ່ນໃຫ້ແຈ້ງ ຫຼື ສະເໜີເປັນລາຍລັກອັກສອນ ສົ່ງຜ່ານສາຍດ່ວນ ຫຼື ສົ່ງມາຍັງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ສຳລັບພຶດຕິກຳຂອງພະນັກງານລັດຖະກອນ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຖ້າເປັນພຶດຕິກຳຂອງພະນັກງານ-ລັດຖະກອນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ແມ່ນໃຫ້ສົ່ງຜ່ານສາຍດ່ວນ 1514 ຫຼື ສົ່ງມາຍັງກົມກວດກາ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍກົງ ເພື່ອເປັນບ່ອນອີງໃນການກວດກາຄືນການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຕາມກົດໝາຍ;

6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ສົມມາດ ພົລເສນາ

<u>ບ່ອນນຳສົ່ງ</u>:

| | |
|---|---|
| – ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ ບ່ອນລະ | 1 ສະບັບ "ເພື່ອຕິດຕາມຊຸກຍູ້ການປະຕິບັດ" |
| – ປະທານສານປະຊາຊົນສູງສຸດ | 1 ສະບັບ "ເພື່ອຊາບ ແລະ ຕິດຕາມການປະຕິບັດ" |
| – ຫົວໜ້າອົງການໄອຍະການປະຊາຊົນສູງສຸດ | 1 ສະບັບ "ເພື່ອຊາບ ແລະ ຕິດຕາມການປະຕິບັດ" |
| – ທ່ານ ຮອງລັດຖະມົນຕີ ກຊສ ທ່ານລະ | 1 ສະບັບ "ເພື່ອຊາບ" |
| – ທ່ານ ເຈົ້າເມືອງ ໃນທົ່ວປະເທດ ບ່ອນລະ | 1 ສະບັບ "ເພື່ອຕິດຕາມຊຸກຍູ້ການປະຕິບັດ" |
| – ກົມກວດກາ, ກົມທີ່ດິນ, ກົມນິຕິກຳ ກຊສ | 1 ສະບັບ "ເພື່ອປະຕິບັດ" |
| – ຫ້ອງການ ກຊສ | 1 ສະບັບ "ເພື່ອລົງຂ່າວຜ່ານສື່ມວນຊົນ" |
| – ເກັບມ້ຽນ | 3 ສະບັບ. |